

# ການສໍາຫລວດພົນລະເມືອງ (census) ແມ່ນນັບບັນທຶກຄົນທຸກຮຸ່ນ.

ທຸກໆ 10 ປີ, ສະຫະລັດ ອາເມຣິການັບບັນທຶກທຸກໆຄົນຜູ້ທີ່ອາໄສຢູ່ໃນປະເທດ, ນັບຕັ້ງເດັກເກີດໃໝ່ ຈົນເຖິງ ຜູ້ເຖົ້າທີ່ຢູ່ຮອບຕົວພວກເຮົາ. ມັນມີຄວາມສໍາຄັນສໍາລັບທຸກຄົນໃນການສໍາເລັດ ການສໍາຫລວດພົນລະເມືອງປະຈໍາປີ 2020 ເພື່ອໃຫ້ຊຸມຊົນດັ່ງຊຸມຊົນຂອງທ່ານສາມາດໄດ້ຮັບການສະໜອງທຶນ ແລະ ຖືກເປັນຕົວແທນຢ່າງຖືກຕ້ອງແມ່ນຍໍາ.

## ການຕອບແມ່ນສໍາຄັນ.

ການສໍາຫລວດພົນລະເມືອງປີ 2020 (The 2020 Census) ຈະສົ່ງຜົນສະທ້ອນໃຫ້ ການສະໜອງທຶນໃນຊຸມຊົນ ແລະ ການເປັນຕົວແທນໃນລັດຖະສະພາ ສໍາລັບທົດສະວັດຕໍ່ໄປ. ຂໍ້ມູນທີ່ເກັບເອົາໃນການສໍາຫລວດພົນລະເມືອງຈະແຈ້ງການຈັດສັນທຶນຫລາຍກວ່າ 675 ຕື້ໂດລາສະຫະລັດໃນທຶນລັດຖະບານກາງ ສໍາລັບລັດ ແລະຊຸມຊົນແຕ່ລະປີ. ຊຶ່ງໃນນັ້ນລວມເຖິງ ເງິນສໍາລັບສິ່ງຕ່າງໆເຊັ່ນ:

› ຜູ້ຕອບສະໜອງທໍາອິດໃນເຫດການສຸ ກ ເສີນຕ່າງໆ
› Medicare ພາກ B
› ທີ່ພັກອາໄສທີ່ໃຫ້ການຊ່ວຍເຫຼືອສໍາລັບ ໂຄງການຄົນສະລາ (Supportive Housing for the Elderly Program)
› ຫໍສະມຸດ ແລະສູນຊຸມຊົນຕ່າງໆ
› ໂຄງການຊ່ວຍເຫຼືອທາງໂພຊະນາການ ຫລື Supplemental Nutrition Assistance Program (SNAP)
› ໂຄງການການຈ້າງງານ ແລະການບໍລິການຊຸມຊົນເພື່ອສະໜັບ ໜູນຜູ້ ເຖົ້າ (Senior Community Service Employment Program)

## ການຕອບແມ່ນງ່າຍດາຍ.

ເລີ່ມຕົ້ນໃນກາງເດືອນມີນາ 2020, ທ່ານສາມາດຕອບ ການສໍາຫລວດພົນລະເມືອງອອນໄລນ໌, ທາງໂທລະສັບ ຫລື ທາງໄປສະນີ. ເລືອກທາງເລືອກທີ່ສະດວກແກ່ທ່ານທີ່ສຸດ. ຄໍາແນະນໍາທີ່ເປັນຮູບແບບການພິມຂະໜາດໃຫ່ຍແມ່ນມີໃຫ້ຕາມການຮ້ອງຂໍ. ຈາກເດືອນພຶດສະພາ – ກໍລະກົດ 2020, ຜູ້ທີ່ເຮັດການສໍາຫລວດຈະເຂົ້າມາຄົວເຮືອນທີ່ຍັງບໍ່ໄດ້ໃຫ້ຄໍາຕອບການສໍາຫລວດເທື່ອ. ຜູ້ທີ່ເຮັດການສໍາຫລວດສາມາດຊ່ວຍເຫລືອທ່ານຫາກທ່ານຕ້ອງການຕື່ມຟອມຂອງທ່ານໃຫ້ສົມບູນ.

## ການຕອບແມ່ນປອດໄພ.

ຂໍ້ມູນສ່ວນຕົວຂອງທ່ານແມ່ນຈະຖືກຮັກສາໄວ້ເປັນຄວາມລັບຕາມກົດໝາຍ. ຄໍາຕອບຂອງທ່ານສາມາດຖືກໃຊ້ເພື່ອເຮັດສະຖິຕິເທົ່ານັ້ນ. ພວກມັນຈະບໍ່ຖືກແບ່ງປັນກັບໜ່ວຍງານບັງຄັບໃຊ້ກົດໝາຍຫລື ຖ◌ືກໃຊ້ເພື່ອຫລິ້ນງານທ່ານໂດຍ ໜ່ວຍງານລັດຖະບານ ຫລື ສານໃນຮູບແບບໃດໜຶ່ງ.

ສໍາລັບຂໍ້ມູນເພີ່ມຕື່ມ, ເຂົ້າໄປທີ່:

**2020CENSUS.GOV**

D-OP-EL-EN-125

Shape your future START HERE >

United States® Census 2020